**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3736-/ກປ
ນະຄອນຫຼວງວຽງຈັນ, ວັນທີ 19 AUG 2022

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງໂຮງງານປຸງແຕ່ງພືດ

- ອີງຕາມ ກົດໝາຍ ວ່າດ້ວຍກະສິກຳ ສະບັບເລກທີ 01/98ສພຊ, ລົງວັນທີ 01 ຕຸລາ 1998;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ) ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 1470/ກປຝ, ລົງວັນທີ 25 ກໍລະກົດ 2022.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສ້າງຕັ້ງ, ການດຳ ເນີນກິດຈະການ, ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຮງງານປຸງແຕ່ງພືດ ເພື່ອໃຫ້ຖືກຕ້ອງຕາມ ມາດຕະຖານເຕັກນິກໂຮງງານ, ມາດຕະຖານຫຼັກການຜະລິດທີ່ດີ, ການຄຸ້ມຄອງຜະລິດຕະພັນ ແລະ ເຄື່ອນ ໄຫວໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແນໃສ່ ປັບປຸງ ແລະ ຍົກລະດັບສະມັດຕະ ພາບການຜະລິດ, ສ້າງມູນຄ່າເພີ່ມ, ສ້າງຜະລິດຕະພັນພືດໃຫ້ມີຄຸນນະພາບ, ໄດ້ມາດຕະຖານດ້ານສຸຂານາໄມ ແລະ ສຸຂານາໄມພືດ, ຫຼຸດຜ່ອນຜົນກະທົບຕໍ່ ຄົນ, ສັດ ແລະ ສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການ ພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງໂຮງງານປຸງແຕ່ງພືດ**

ການຄຸ້ມຄອງໂຮງງານປຸງແຕ່ງພືດ ແມ່ນ ການຄົ້ນຄວ້າ, ພິຈາລະນາ ກ່ຽວກັບ ການອອກ, ໂຈະ ແລະ ຍົກເລີກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ, ໃບຢັ້ງຢືນການດຳເນີນກິດຈະການ ໂຮງງານປຸງແຕ່ງພືດ, ໃບຢັ້ງຢືນມາດຕະຖານໂຮງງານປຸງແຕ່ງພືດ, ໃບຢັ້ງຢືນການຜະລິດທີ່ດີ ແລະ ການຄຸ້ມ ຄອງກິດຈະກຳ ຂອງໂຮງງານປຸງແຕ່ງພືດ, ການວາງແຜນວັດຖຸດິບ, ການຜະລິດວັດຖຸດິບ, ການປຸງແຕ່ງຕິດພັນ ກັບການຕະຫຼາດ ພ້ອມທັງ ຊຸກຍູ້, ຕິດຕາມ ແລະ ກວດກາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ມາດຕະຖານ ເຕັກນິກໂຮງງານປຸງແຕ່ງພືດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້. ຂ.ອ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງງານປຸງແຕ່ງພືດ** ໝາຍເຖິງ ສະຖານທີ່ດຳເນີນກິດຈະການປຸງແຕ່ງພືດ ແລະ ຜະລິດຕະພັນພືດ ເປັນຕົ້ນ ໂຮງສີເຂົ້າ, ໂຮງງານປຸງແຕ່ງມັນຕົ້ນ, ໂຮງງານປຸງແຕ່ງອ້ອຍ ແລະ ໂຮງງານຫຸ້ມຫໍ່ຜະລິດຕະພັນພືດ ຊຶ່ງປະກອບດ້ວຍ ເຄື່ອງຈັກ, ໂຮງເຮືອນ, ວັດຖຸປະກອບ ໂດຍໄດ້ຈັດແບ່ງໂຮງງານປຸງແຕ່ງພືດເປັນສາມຂະໜາດ ຄື: ໂຮງງານປຸງແຕ່ງພືດ ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ຂຶ້ນກັບ ກຳລັງແຮງຂອງເຄື່ອງຈັກ ແລະ ຈຳນວນແຮງງານຂອງຄົນງານ. ບັນຊີໂຮງງານປຸງແຕ່ງພືດ ກະຊວງກະສິກຳ ແລະ ປ່າໄມ້ ຈະທົບທວນ ແລະ ປັບປຸງ ໃນແຕ່ລະໄລຍະ;
2. **ມາດຕະຖານເຕັກນິກໂຮງງານປຸງແຕ່ງພືດ** ໝາຍເຖິງ ມາດຕະຖານດ້ານ ທີ່ຕັ້ງ, ອາຄານ, ເຄື່ອງຈັກ, ອຸປະກອນ, ຄວາມສະອາດ, ປອດໄພ, ສຸຂານາໄມ, ຂະບວນການຜະລິດ ແລະ ສິ່ງແວດລ້ອມຂອງໂຮງງານ;
3. **ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຖືກຕ້ອງຕາມລະບຽບກົດໝາຍ;
4. **ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ** ໝາຍເຖິງ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ໂຮງງານປຸງແຕ່ງພືດ ເພື່ອດຳເນີນການຜະລິດ ພາຍຫຼັງທີ່ໂຮງງານ ໄດ້ສຳເລັດການສ້າງຕັ້ງ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານການຜະລິດທົດລອງ;
5. **ສິ່ງເສດເຫຼືອ** ໝາຍເຖິງ ສິ່ງທີ່ເກີດຂຶ້ນ ໃນໄລຍະການກໍ່ສ້າງ, ດຳເນີນ ແລະ ຢຸດເຊົາກິດຈະການໂຮງງານປຸງແຕ່ງພືດ ທີ່ບໍ່ສາມາດນຳໃຊ້ໄດ້ເປັນຕົ້ນ ສິ່ງເສດເຫຼືອປະເພດ ແຂງ, ແຫຼວ ແລະ ອາຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານປຸງແຕ່ງພືດ ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງໂຮງງານປຸງແຕ່ງພືດ

**ມາດຕາ 5 ການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ**

ການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ແມ່ນ ການກະກຽມປະກອບເອກະສານ ແລະ ສ້າງບົດວິພາກເສດຖະກິດ-ເຕັກນິກ ໃຫ້ຖືກຕ້ອງຕາມເງື່ອນໄຂ ແລະ ມາດຕະຖານເຕັກນິກໂຮງງານປຸງແຕ່ງພືດ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ພິຈາລະນາ ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ຕ້ອງສະເໜີເຈດຈຳນົງມາຫາກະຊວງກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້າເຫັນດີທາງດ້ານຫຼັກການ ຫຼັງຈາກນັ້ນຈຶ່ງສາມາດໄປປະກອບເອກະສານອື່ນໆທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ໃບທະບຽນວິສາຫະກິດ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ, ໃບຢັ້ງຢືນປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໃບອະນຸຍາດປຸກສ້າງໂຮງງານ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ. ໒.໑໔

**ມາດຕາ 6 ເງື່ອນໄຂການຂໍອະນຸຍາດ ສ້າງຕັ້ງໂຮງງານປຸງແຕ່ງພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງໂຮງງານປຸງແຕ່ງພືດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ ທີ່ຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ;
2. ມີງົບປະມານການລົງທຶນ, ເຄື່ອງຈັກ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້;
3. ມີວິຊາການ ທີ່ມີຄຸນວຸດທິການສຶກສາ, ເຄີຍຜ່ານງານ ແລະ ມີປະສົບການ ທີ່ກ່ຽວຂ້ອງກັບໂຮງງານປຸງແຕ່ງພືດ;
4. ມີພື້ນທີ່ສ້າງຕັ້ງໂຮງງານ ແລະ ພື້ນທີ່ການຜະລິດ ຫຼື ແຫຼ່ງວັດຖຸດິບ;
5. ມີເງື່ອນໄຂອື່ນ ກ່ຽວກັບ ການດຳເນີນກິດຈະການສ້າງຕັ້ງໂຮງງານປຸງແຕ່ງພືດ.

**ມາດຕາ 7 ເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ**

ການປະກອບເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ປະກອບມີ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ຕາມແບບພິມ ຣ1 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;
2. ບົດວິພາກເສດຖະກິດ-ເຕັກນິກໂຮງງານປຸງແຕ່ງພືດ;
3. ສຳເນົາ ໃບທະບຽນວິສາຫະກິດ;
4. ສຳເນົາ ໃບຢັ້ງຢືນການມອບອາກອນ;
5. ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;
6. ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;
7. ສຳເນົາ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສຳລັບໂຮງງານປຸງແຕ່ງພືດ;
8. ສຳເນົາ ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບມອບກຳມະສິດທີ່ດິນ ຫຼື ໃບຕາດິນ;
9. ສຳເນົາ ໃບອະນຸຍາດປຸກສ້າງ.

**ມາດຕາ 8 ບົດວິພາກເສດຖະກິດ-ເຕັກນິກໂຮງງານປຸງແຕ່ງພືດ**

ການສ້າງບົດວິພາກເສດຖະກິດ-ເຕັກນິກໂຮງງານປຸງແຕ່ງພືດ ຕ້ອງປະກອບເນື້ອໃນ ດັ່ງນີ້:

1. **ສະພາບລວມໂຄງການ**
   1) ທີ່ຕັ້ງຂອງໂຄງການ;
   2) ເຫດຜົນການສະເໜີໂຄງການ;
   3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.
2. **ເຕັກນິກການກໍ່ສ້າງໂຮງງານ**
   1) ສະຖານທີ່ສ້າງຕັ້ງໂຮງງານ;
   2) ແຜນການປຸກສ້າງອາຄານໂຮງງານ ແລະ ອາຄານອື່ນ;
   3) ແຜນການນຳໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;
   4) ແຜນການນຳໃຊ້ວັດຖຸດິບ;
   5) ແຜນວາດຂະບວນການຜະລິດ ແລະ ບົດອະທິບາຍ;
   6) ການຄຸ້ມຄອງດ້ານສິ່ງແວດລ້ອມ;
   7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານ;
   8) ສະຫວັດດີການໂຮງງານ;
   9) ສຳເນົາແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
   10) ແຜນງົບປະມານ ເພື່ອອຳນວຍຄວາມສະດວກໃຫ້ພາກລັດ ຈັດຕັ້ງປະຕິບັດວຽກງານຊຸກຍູ້, ຕິດຕາມ ແລະ ກວດກາ. ໗.໑໘

**3. ພາກເສດຖະກິດ**

1) ຕົ້ນທຶນການຜະລິດ;
2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ກໍາໄລ;
3) ແຜນການຜະລິດ ແລະ ຈໍາໜ່າຍ;
4) ແຜນການນໍາໃຊ້ແຮງງານ.

**4. ຄາດຄະເນຜົນໄດ້ຮັບຈາກໂຄງການ**

1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);
2) ການວິເຄາະຄວາມສ່ຽງ ໃນການດໍາເນີນກິດຈະການໂຮງງານປຸງແຕ່ງພືດ.

## ມາດຕາ 9 ຂັ້ນຕອນການສ້າງຕັ້ງໂຮງງານປຸງແຕ່ງພືດ

ພາຍຫຼັງທີ່ໄດ້ປະກອບເອກະສານຄົບຊຸດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລ້ວ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກວດກາເນື້ອໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ;
2. ປະສານກັບຂະແໜງການທີ່ກ່ຽວຂ້ອງ ກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງພືດ;
3. ພິຈາລະນາການອອກ ຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ;
4. ເລີ່ມກໍ່ສ້າງໂຮງງານປຸງແຕ່ງພືດພາຍຫຼັງໄດ້ຮັບຂໍ້ຕົກລົງ ວ່າດ້ວຍການອະນຸຍາດ ສ້າງຕັ້ງໂຮງງານປຸງແຕ່ງພືດ;
5. ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາ ການສ້າງຕັ້ງໂຮງງານປຸງແຕ່ງພືດ.

## ມາດຕາ 10 ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງພືດ

ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງຕ້ອງປະກອບມີຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້;
2. ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ;
3. ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ;
4. ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
5. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
6. ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກໍານົດແຈ້ງ ຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານປຸງແຕ່ງພືດ ຄື: ໂຮງງານຕ້ອງບໍ່ຕັ້ງຢູ່ໃນ ເຂດຊຸມຊົນ ແລະ ເຂດຫວງຫ້າມ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທໍາ, ເຂດປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ແຫຼ່ງຕົ້ນນໍ້າ, ເຂດອານຸລັກຊີວະນາໆພັນ. ຜູ້ລົງກວດກາ ຕ້ອງລົງລາຍເຊັນໃນບົດບັນທຶກ, ເນື້ອໃນການກວດກາ ຕ້ອງຖືກຕ້ອງຕາມລະບຽບກົດໝາຍ ໃນແຕ່ລະໄລຍະ.

## ມາດຕາ 11 ການພິຈາລະນາ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ

ພາຍຫຼັງສໍາເລັດ ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງພືດ ແລະ ມີບົດບັນທຶກການກວດກາໂຮງງານ ທີ່ເຫັນດີໃຫ້ດໍາເນີນການສ້າງຕັ້ງໂຮງງານ, ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ພາຍໃນ ສິບ ວັນລັດຖະການ ນັບແຕ່ມື້ເຊັນບົດບັນທຶກການກວດກາໂຮງງານ. ໒.໑໔

**ມາດຕາ 12 ຂະໜາດໂຮງງານປຸງແຕ່ງພືດ**

ໂຮງງານປຸງແຕ່ງພືດ ປະກອບດ້ວຍ ສາມ ຂະໜາດ ແລະ ມີທຶນ ຕາມກິດຈະການຂອງໂຮງງານປຸງແຕ່ງພືດ ດັ່ງນີ້:

1. ໂຮງງານປຸງແຕ່ງພືດ ຂະໜາດນ້ອຍ ແມ່ນ ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ ສິບ ແຮງມ້າ ຫາ ຫ້າສິບ ແຮງມ້າ ຫຼື ຈຳນວນແຮງງານແຕ່ ສິບ ຄົນ ຫາ ຫ້າສິບ ຄົນ;
2. ໂຮງງານປຸງແຕ່ງພືດ ຂະໜາດກາງ ແມ່ນ ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ ຫ້າສິບເອັດ ແຮງມ້າ ຫາ ສອງຮ້ອຍ ແຮງມ້າ ຫຼື ຈຳນວນແຮງງານແຕ່ ຫ້າສິບເອັດ ຄົນ ຫາ ສອງຮ້ອຍ ຄົນ;
3. ໂຮງງານປຸງແຕ່ງພືດ ຂະໜາດໃຫຍ່ ແມ່ນ ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ ສອງຮ້ອຍໜຶ່ງ ແຮງມ້າ ຂຶ້ນໄປ ຫຼື ຈຳນວນແຮງງານແຕ່ ສອງຮ້ອຍໜຶ່ງ ຄົນ ຂຶ້ນໄປ.

ທຶນຈົດທະບຽນຂອງກິດຈະການໂຮງງານປຸງແຕ່ງພືດ ແມ່ນອີງຕາມຂະໜາດຂອງໂຮງງານ ຊຶ່ງບໍ່ໃຫ້ຫຼຸດ ສາມສິບ ສ່ວນຮ້ອຍ ຂອງມູນຄ່າການລົງທຶນທັງໝົດ.

## ໝວດທີ 3
## ການດຳເນີນກິດຈະການໂຮງງານປຸງແຕ່ງພືດ

**ມາດຕາ 13 ການດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ການດຳເນີນກິດຈະການໂຮງງານປຸງແຕ່ງພືດ ແມ່ນ ການເຄື່ອນໄຫວດຳເນີນກິດຈະການໂຮງງານ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໂຮງງານປຸງແຕ່ງພືດ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ພິຈາລະນາອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 14 ເງື່ອນໄຂການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ສຳເລັດການກໍ່ສ້າງໂຮງງານປຸງແຕ່ງພືດ;
2. ຜ່ານການຜະລິດທົດລອງ.

**ມາດຕາ 15 ສຳເລັດການກໍ່ສ້າງໂຮງງານປຸງແຕ່ງພືດ**

ການສຳເລັດການກໍ່ສ້າງໂຮງງານປຸງແຕ່ງພືດ ແມ່ນຜົນສຳເລັດຂອງການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບປ້ອງກັນຄວາມປອດໄພ, ສຸຂານາໄມ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນໂຮງງານ ສຳເລັດເປັນທີ່ຮຽບຮ້ອຍ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ຕາມທີ່ສະເໜີໄວ້ໃນບົດວິພາກເສດຖະກິດ-ເຕັກນິກ.

**ມາດຕາ 16 ການຜະລິດທົດລອງ**

ການຜະລິດທົດລອງ ແມ່ນຂະບວນການຜະລິດ ແລະ ປຸງແຕ່ງ ເພື່ອກວດສອບຄວາມພ້ອມ ຕາມມາດຕະຖານເຕັກນິກປະສິດທິພາບຂອງໂຮງງານ ແລະ ຄຸນນະພາບຂອງສິນຄ້າ ລວມທັງ ລະບົບຄວາມປອດໄພ, ລະບົບການກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນໂຮງງານ.

ການຜະລິດທົດລອງ ໃຊ້ເວລາສູງສຸດບໍ່ເກີນ ເກົ້າສິບ ວັນ ກ່ອນການສະເໜີຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈຳໜ່າຍ, ແຈກຢາຍ ຫຼື ຂາຍຜະລິດຕະພັນຂອງໂຮງງານ. ໒.໙

**ມາດຕາ 17 ການປະກອບເອກະສານຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ການສະເໜີຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມແບບພິມ ຣ1 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;
2. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ຂອງກະຊວງກະສິກຳ ແລະ ປ່າໄມ້;
3. ໃບມອບສິດ ໃນກໍລະນີໃຫ້ບຸກຄົນອື່ນມາພົວພັນແທນ;
4. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;
5. ລາຍການເຄື່ອງຈັກໃນໂຮງງານ;
6. ແຜນການເຄື່ອນໄຫວປະຈຳປີຂອງໂຮງງານປຸງແຕ່ງພືດ;
7. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
8. ຮູບຖ່າຍຂະໜາດ 3x4 ຊັງຕີແມັດ ຈຳນວນ ສີ່ ໃບ ຮູບຖ່າຍຕ້ອງບໍ່ເກີນ ສາມ ເດືອນ;
9. ສຳເນົາ ໃບຢັ້ງຢືນການມອບອາກອນ;
10. ສຳເນົາ ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສຳລັບໂຮງງານປຸງແຕ່ງພືດ;
11. ສຳເນົາ ໃບທະບຽນວິສາຫະກິດ;
12. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງຄົນຕ່າງປະເທດ (Passport);
13. ສຳເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສຳປະທານ;
14. ສຳເນົາ ໃບຢັ້ງຢືນແຜນການຕິດຕັ້ງລະບົບບຳບັດ ຫຼື ໃບຢັ້ງຢືນການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານປຸງແຕ່ງພືດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 18 ການຄົ້ນຄວ້າເອກະສານ**

ພາຍຫຼັງ ໄດ້ຮັບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້, ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຊຸດເອກະສານທັນທີ ໂດຍແຈ້ງໃຫ້ຜູ້ສະເໜີຮັບຊາບ ຢ່າງເປັນລາຍລັກອັກສອນ (ກຳນົດເອົາ ຫ້າ ວັນລັດຖະການ).

**ມາດຕາ 19 ການກວດກາ ແລະ ປະເມີນ ໂຮງງານປຸງແຕ່ງພືດ ກ່ອນອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການ ເພື່ອລົງກວດກາໂຮງງານປຸງແຕ່ງພືດພາຍໃນ ຫ້າ ວັນລັດຖະການ. ໃນກໍລະນີ ບໍ່ປະຕິບັດຕາມບົດວິພາກເສດຖະກິດ-ເຕັກນິກ ຄະນະກຳມະການກວດກາ ຕ້ອງໃຫ້ຄຳແນະນຳ ເພື່ອປັບປຸງ ແລະ ແກ້ໄຂພາຍໃນເວລາທີ່ກຳນົດໄວ້ ພ້ອມທັງເຮັດບົດບັນທຶກຜົນການກວດກາ ແລະ ລົງລາຍເຊັນ ຈາກຄະນະກຳມະການກວດກາ ແລະ ເຈົ້າຂອງໂຮງງານປຸງແຕ່ງພືດ.

ພາຍຫຼັງເຈົ້າຂອງໂຮງງານປຸງແຕ່ງພືດ ໄດ້ປັບປຸງຕາມຄຳແນະນຳໃນບົດບັນທຶກແລ້ວ ໃຫ້ສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອກວດກາຄືນ ແລະ ເຮັດບົດບັນທຶກຜົນການປັບປຸງໂຮງງານປຸງແຕ່ງພືດ. ໃນກໍລະນີ ບໍ່ສາມາດປັບປຸງທັນຕາມກຳນົດເວລາ ຕ້ອງແຈ້ງເຫດຜົນຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຊາບພາຍໃນ ຫ້າ ວັນລັດຖະການ ນັບແຕ່ມື້ໝົດກຳນົດເວລາ ໃນບົດບັນທຶກການກວດກາໂຮງງານ.

**ມາດຕາ 20 ການພິຈາລະນາ ແລະ ການອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ, ຖືກຕ້ອງ, ໄດ້ກວດກາໂຮງງານປຸງແຕ່ງພືດ ແລະ ມີບົດບັນທຶກກວດກາໂຮງງານແລ້ວ, ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ພາຍໃນ ຫ້າ ວັນລັດຖະການ ຕາມແບບພິມ ຣ2 ໃນເອກະສານຊ້ອນທ້າຍ

ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງຈ້ຳກາໃສ່ເອກະສານທັງໝົດ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ຢ່າງເປັນລະບົບຕໍ່ເນື່ອງ.

ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ມີອາຍຸ ສາມ ປີ ແລະ ສາມາດຕໍ່ໄດ້. ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງສະແດງໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດຂອງຕົນ.

### ມາດຕາ 21 ການຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ

ກ່ອນໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຈະໝົດອາຍຸພາຍໃນ ສາມສິບ ວັນ ຜູ້ດຳເນີນກິດຈະການ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ກັບຂະແໜງການກະສິກຳ ແລະ ປ່າໄມ້ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຍື່ນຄຳຮ້ອງຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມແບບພິມ ຮ1 ໃນເອກະສານຊ້ອນທ້າຍ ຂອງຂໍ້ຕົກລົງສະບັບນີ້, ພ້ອມທັງບົດລາຍງານສະພາບການດຳເນີນກິດຈະການໂຮງງານປຸງແຕ່ງພືດໄລຍະຜ່ານມາ ແລະ ເອກະສານກ່ຽວຂ້ອງ. ໃນກໍລະນີ ມີການປ່ຽນແປງຈາກເດີມ ຕ້ອງປະກອບເອກະສານ ຕາມທີ່ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;
2. ຂັ້ນຕອນການພິຈາລະນາ ຕໍ່ອາຍຸ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ໃຫ້ປະຕິບັດຄືກັນກັບມາດຕາ 17, 18 ແລະ ລົງກວດກາເບິ່ງພື້ນທີ່ຂອງໂຮງງານປຸງແຕ່ງພືດຕົວຈິງ.

ການຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ມີອາຍຸ ສາມ ປີ ຍົກເວັ້ນໃນກໍລະນີມີການເຊົ່າທີ່ດິນປຸກສ້າງໂຮງງານ ແມ່ນໃຫ້ຕໍ່ໃບອະນຸຍາດ ຕາມກຳນົດເວລາທີ່ຍັງເຫຼືອໃນສັນຍາເຊົ່າທີ່ດິນ.

### ມາດຕາ 22 ການໂຈະ ແລະ ຍົກເລີກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ

ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຈະຖືກໂຈະ ແລະ ຍົກເລີກ ໃນກໍລະນີໃດໜຶ່ງດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ;
2. ດຳເນີນທຸລະກິດບໍ່ຖືກຕ້ອງ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ມີອຸປະຕິເຫດເກີດຂຶ້ນພາຍໃນໂຮງງານປຸງແຕ່ງພືດ ແລະ ເຈົ້າໜ້າທີ່ ໄດ້ເຂົ້າກວດກາໂຮງງານ ແລະ ເຄື່ອງຈັກແລ້ວເຫັນວ່າ ໂຮງງານ ບໍ່ສາມາດສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ການໄດ້ ແລະ ບໍ່ມີຄວາມປອດໄພຕໍ່ຜູ້ອອກແຮງງານ;
4. ມີການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການໂຈະໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ແມ່ນເພື່ອໃຫ້ຜູ້ດຳເນີນກິດຈະການປັບປຸງ, ແກ້ໄຂ ໃນເວລາໃດໜຶ່ງທີ່ແນ່ນອນ ໂດຍຂະແໜງການກະສິກຳ ແລະ ປ່າໄມ້ ເປັນຜູ້ແຈ້ງຕໍ່ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ຊາບ.

ໃນກໍລະນີ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ບໍ່ປະຕິບັດຕາມການແຈ້ງ ຫຼື ສະເໜີ ຂອງຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການກະສິກຳ ແລະ ປ່າໄມ້ ມີສິດຍົກເລີກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

### ມາດຕາ 23 ການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານຄືນໃໝ່

ໃນກໍລະນີໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງຕໍ່ອົງການປົກຄອງທ້ອງຖິ່ນ ຕາມລະບຽບການ ພ້ອມທັງຍື່ນຄຳຮ້ອງຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນແຈ້ງເສຍຫາຍຈາກອົງການປົກຄອງທ້ອງຖິ່ນ ເພື່ອສະເໜີອອກໃບຢັ້ງຢືນຄືນໃໝ່. ໒.໑໒

# ໝວດທີ 4
## ການປ່ຽນແປງກິດຈະການໂຮງງານປຸງແຕ່ງພືດ

### ມາດຕາ 24 ການປ່ຽນແປງກິດຈະການໂຮງງານປຸງແຕ່ງພືດ

ການປ່ຽນແປງກິດຈະການໂຮງງານປຸງແຕ່ງພືດ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານປຸງແຕ່ງພືດ;
2. ການຍົກຍ້າຍໂຮງງານປຸງແຕ່ງພືດ;
3. ການຍົກຍ້າຍເຄື່ອງຈັກ;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ;
5. ການສິ້ນສຸດການດຳເນີນກິດຈະການໂຮງງານປຸງແຕ່ງພືດ;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ.

### ມາດຕາ 25 ການຂະຫຍາຍໂຮງງານປຸງແຕ່ງພືດ

ການຂະຫຍາຍໂຮງງານ ມີ ສາມ ຮູບການຄື: ການເພີ່ມເຄື່ອງຈັກ, ການເພີ່ມເນື້ອທີ່ອາຄານຜະລິດຂອງໂຮງງານປຸງແຕ່ງພືດ ແລະ ການເພີ່ມທັງສອງຢ່າງພ້ອມກັນ.

**1. ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກມີ ສອງ ກໍລະນີ ດັ່ງນີ້:**

ກໍລະນີທີ ໜຶ່ງ: ໂຮງງານປຸງແຕ່ງພືດ ທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານປຸງແຕ່ງພືດ ເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ກໍລະນີທີ ສອງ: ໂຮງງານປຸງແຕ່ງພືດ ທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານປຸງແຕ່ງພືດ ເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ແຮງມ້າ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

**2. ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ ມີ ສອງ ກໍລະນີ ດັ່ງນີ້:**

ກໍລະນີທີ ໜຶ່ງ: ອາຄານຜະລິດຂອງໂຮງງານປຸງແຕ່ງພືດ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ກໍລະນີທີ ສອງ: ອາຄານຜະລິດຂອງໂຮງງານປຸງແຕ່ງພືດ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ໜຶ່ງຮ້ອຍ ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ການຂະຫຍາຍໂຮງງານປຸງແຕ່ງພືດ ດ້ວຍການເພີ່ມອາຄານທີ່ບໍ່ແມ່ນ ອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ ຫຼື ຫ້ອງການບໍລິຫານອື່ນໆ ບໍ່ຖືວ່າເປັນການຂະຫຍາຍ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການກ່ຽວກັບ ການປຸກສ້າງ.

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ສາມາດຂະຫຍາຍໂຮງງານຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດ ຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ ໃນສ່ວນທີ່ຂະຫຍາຍ.

### ມາດຕາ 26 ການຍົກຍ້າຍໂຮງງານປຸງແຕ່ງພືດ

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ສາມາດຍົກຍ້າຍໂຮງງານປຸງແຕ່ງພືດ ໄປຕັ້ງຢູ່ສະຖານທີ່ອື່ນໄດ້ ຕ້ອງໄດ້ດັດແກ້ບັນດາເອກະສານທີ່ກ່ຽວຂ້ອງກັບການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານປຸງແຕ່ງພືດຢູ່ສະຖານທີ່ໃໝ່. ໃນນີ້, ສະຖານທີ່ຕັ້ງໂຮງງານປຸງແຕ່ງພືດບ່ອນໃໝ່ ຕ້ອງປະຕິບັດເງື່ອນໄຂ ດ້ານທີ່ຕັ້ງໂຮງງານປຸງແຕ່ງພືດ ຕາມມາດຕາ 7 ແລະ ການສະເໜີອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມມາດຕາ 13 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍໂຮງງານປຸງແຕ່ງພືດ ຕ້ອງສະເໜີຂໍຢຸດເຊົາ ແລະ ຍຸບເລີກໂຮງງານປຸງແຕ່ງພືດຫຼັງເດີມ ຕາມມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້. ໗.໙

**ມາດຕາ 27 ການຍົກຍ້າຍເຄື່ອງຈັກ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ ສອງ ຮູບການ ຄື ການຍົກຍ້າຍເຄື່ອງຈັກຊົ່ວຄາວ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກບາງສ່ວນຢູ່ພາຍໃນໂຮງງານປຸງແຕ່ງພືດ ໄປຍັງສະຖານທີ່ອື່ນເປັນການຊົ່ວຄາວ ໃຫ້ຍື່ນໃບສະເໜີຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ, ການຍົກຍ້າຍເຄື່ອງຈັກຊົ່ວຄາວຕ້ອງເອົາກັບຄືນພາຍໃນ ໜຶ່ງ ປີ ນັບແຕ່ວັນທີ່ໄດ້ຮັບອະນຸຍາດເປັນຕົ້ນໄປ, ກໍລະນີຫາກມີຄວາມຈຳເປັນຕ້ອງການນຳໃຊ້ເກີນ ໜຶ່ງ ປີ ສາມາດສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ໂດຍຊີ້ແຈງເຫດຜົນໃຫ້ລະອຽດເພື່ອຂໍຕໍ່ກຳນົດເວລາ, ແຕ່ສູງສຸດຕໍ່ໄດ້ບໍ່ເກີນ ໜຶ່ງ ປີ, ພ້ອມນີ້ ຕ້ອງລະບຸເງື່ອນໄຂ ຫຼື ວິທີການ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງ;

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຊາບ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດ ລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ ແລະ ໃນນັ້ນ ຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ ສິບຫ້າ ວັນ.

**ມາດຕາ 28 ການໂອນ, ການໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ**

ໃນກໍລະນີມີການ ໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານປຸງແຕ່ງພືດໃຫ້ຜູ້ອື່ນ ພາຍຫຼັງສິ້ນສຸດຂັ້ນຕອນ ຕາມທີ່ກຳນົດໄວ້ ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງແລ້ວ ຜູ້ດຳເນີນກິດຈະການໂຮງງານຜູ້ເກົ່າ ຕ້ອງລາຍງານໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້ ຊາບພາຍໃນ ສິບຫ້າ ວັນ ນັບແຕ່ມື້ໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານເປັນຕົ້ນໄປ;

ຜູ້ໄດ້ຮັບການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການໂຮງງານນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ,ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ຈາກເຈົ້າຂອງເດີມມາເປັນ ຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການ ພາຍໃນ ສາມສິບ ວັນ ນັບແຕ່ມື້ໄດ້ເຊັນສັນຍາໂອນ, ເຊົ່າ ຫຼື ຊື້ກິດຈະການດັ່ງກ່າວ.

**ມາດຕາ 29 ການສືບທອດການດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ຊາບພາຍໃນ ຫົກສິບ ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ໂດຍປ່ຽນຊື່ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ໄດ້ເສຍຊີວິດເກີນ ເກົ້າສິບ ວັນ ຫາກບໍ່ມີຜູ້ສະເໜີຂໍສືບທອດ ຖືວ່າໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດນັ້ນ ໄດ້ໝົດອາຍຸລົງ ພ້ອມກັບການເສຍຊີວິດຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ. ຖ້າຫາກມີຜູ້ສືບທອດການດຳເນີນກິດຈະການໂຮງງານປຸງແຕ່ງພືດຄືນໃໝ່, ພາຍຫຼັງໝົດກຳນົດເວລາທີ່ລະບຸໄວ້ ໃຫ້ປະຕິບັດ ຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໂຮງງານໃໝ່.

**ມາດຕາ 30 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດໍາເນີນກິດຈະການໂຮງງານປຸງແຕ່ງພືດ**

ການດໍາເນີນກິດຈະການໂຮງງານປຸງແຕ່ງພືດ ສາມາດປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດໍາເນີນກິດຈະການໂຮງງານປຸງແຕ່ງພືດໄດ້ ແຕ່ຕ້ອງສະເໜີຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້ ຫຼື ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດໍາເນີນທຸລະກິດ ແລະ ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງພືດ ຕາມການແບ່ງຂັ້ນຄຸ້ມຄອງ.

## ໝວດທີ 5
## ການຄຸ້ມຄອງກິດຈະກໍາ ຂອງໂຮງງານປຸງແຕ່ງພືດ

**ມາດຕາ 31 ການຄຸ້ມຄອງກິດຈະກໍາຂອງໂຮງງານປຸງແຕ່ງພືດ**

ການຄຸ້ມຄອງກິດຈະກໍາຂອງໂຮງງານປຸງແຕ່ງພືດ ປະກອບມີ ດັ່ງນີ້:

1. ການສ້າງແຜນການເຄື່ອນໄຫວກິດຈະກໍາໂຮງງານປຸງແຕ່ງພືດ;
2. ການຄຸ້ມຄອງສະຖານທີ່, ອາຄານ, ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່;
3. ການຄຸ້ມຄອງຂະບວນການຜະລິດ ແລະ ການປຸງແຕ່ງ;
4. ການຄຸ້ມຄອງການນໍາເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສໍາເລັດຮູບ;
5. ການຄຸ້ມຄອງບຸກຄະລາກອນ;
6. ການຄຸ້ມຄອງສຸຂານາໄມ ແລະ ສຸຂານາໄມພືດ;
7. ການຄຸ້ມຄອງຜະລິດຕະພັນ;
8. ການຄຸ້ມຄອງການກໍາຈັດ ແລະ ບໍາບັດສິ່ງເສດເຫຼືອ;
9. ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ.

**ມາດຕາ 32 ການສ້າງແຜນການເຄື່ອນໄຫວກິດຈະກໍາໂຮງງານປຸງແຕ່ງພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງສ້າງແຜນການເຄື່ອນໄຫວ ປະຈໍາງວດ ແລະ ປະຈໍາປີ ເຊັ່ນ: ແຜນການຜະລິດ, ແຜນການຈໍາໜ່າຍ, ແຜນຄວາມຕ້ອງການວັດຖຸດິບປະຈໍາປີ, ໃບຄິດໄລ່ລາຄາຂອງຜະລິດຕະພັນ, ກໍານົດໃນບົດວິພາກເສດຖະກິດ-ເຕັກນິກ, ການສິ້ນເປືອງຕໍ່ຫົວໜ່ວຍຜະລິດຕະພັນ ແລະ ການສະຫຼຸບການນໍາເຂົ້າວັດຖຸດິບ, ອາໄຫຼ່, ອຸປະກອນ, ຊິ້ນສ່ວນ ແລະ ເຄື່ອງຈັກ ແລ້ວນໍາສະເໜີຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້ ເພື່ອພິຈາລະນາຮັບຮອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງສະຫຼຸບລາຍງານຂໍ້ມູນການເຄື່ອນໄຫວການຜະລິດຕົວຈິງຂອງໂຮງງານ ຕາມແຜນການເຄື່ອນໄຫວປະຈໍາປີ ສົ່ງໃຫ້ຂະແໜງການກະສິກໍາ ແລະ ປ່າໄມ້ ປະຈໍາ ສາມ ເດືອນ, ຫົກ ເດືອນ ແລະ ປີ.

**ມາດຕາ 33 ການຄຸ້ມຄອງສະຖານທີ່, ອາຄານ, ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່**

ສະຖານທີ່ຂອງໂຮງງານປຸງແຕ່ງພືດ ຕ້ອງຮັບປະກັນບໍ່ໃຫ້ເກີດການປົນເປື້ອນຕໍ່ຂະບວນການຜະລິດ, ການປຸງແຕ່ງ ແລະ ຜະລິດຕະພັນ, ບໍ່ມີການສະສົມຂອງສິ່ງເສດເຫຼືອຈາກການປຸງແຕ່ງ, ບໍ່ມີຝຸ່ນຄວັນຫຼາຍກວ່າປົກກະຕິ, ບໍ່ມີສັດລ້ຽງໃນພື້ນທີ່ຂອງໂຮງງານ, ພື້ນທີ່ຮາບພຽງດີບໍ່ມີນໍ້າຂັງ, ບໍ່ມີສິ່ງເປິເປື້ອນອ້ອມຮອບອາຄານ ແລະ ຕ້ອງມີທໍ່ລະບາຍນໍ້າເສຍ.

ອາຄານຂອງໂຮງງານ ຕ້ອງແຍກທີ່ພັກອາໄສ ແລະ ພື້ນທີ່ການຜະລິດ ອອກຈາກກັນ ພ້ອມທັງໃຫ້ມີສາງເກັບມ້ຽນ ຜົນຜະລິດ, ເຄື່ອງມືອຸປະກອນ ແລະ ເຄມີອັນຕະລາຍ ເພື່ອປ້ອງກັນການປົນເປື້ອນ. ອາຄານຕ້ອງມີພື້ນ ແລະ ເພດານທີ່ແໜ້ນໜາຮາບພຽງດີ ສາມາດອະນາໄມໄດ້ງ່າຍ, ມີແສງສະຫວ່າງພຽງພໍ ສໍາລັບ ໝ.ໜ

ການປະຕິບັດງານ, ມີການລະບາຍອາກາດທີ່ເໝາະສົມ ບໍ່ແອອັດ ແລະ ບໍ່ມີຄວາມຊຸ່ມສູງ, ມີມາດຕະການປ້ອງກັນການປົນເປື້ອນຈາກສັດ ແລະ ແມງໄມ້.

ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນກໍ່ສ້າງໂຮງງານປຸງແຕ່ງພືດ ຕ້ອງມີແຜນການບຳລຸງຮັກສາ, ແຜນປ້ອງກັນ ແລະ ດຳເນີນການກວດກາຢ່າງເປັນປະຈຳ ເພື່ອຮັບປະກັນການນຳໃຊ້ ໃຫ້ມີຄຸນນະພາບ, ສະອາດ, ປອດໄພ ແລະ ປ້ອງກັນອຸປະຕິເຫດທີ່ອາດເກີດຂຶ້ນ ຈາກຄວາມຜິດພາດໃນການເຮັດວຽກຂອງເຄື່ອງຈັກ.

ການນຳເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນກໍ່ສ້າງໂຮງງານປຸງແຕ່ງພືດທີ່ນຳເຂົ້າມາໃຊ້ໃນໂຮງງານຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ທັນສະໄໝ ແລະ ຖືກຕ້ອງຕາມເປົ້າໝາຍຂອງການດຳເນີນກິດຈະການ ໂດຍສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ແລະ ຕ້ອງຂໍອະນຸຍາດນຳເຂົ້າຈາກ ຂະແໜງການກະສິກຳ ແລະ ປ່າໄມ້.

## ມາດຕາ 34 ການຄຸ້ມຄອງຂະບວນການຜະລິດ

ໂຮງງານທຸກຂະໜາດທີ່ນຳໃຊ້ວັດຖຸດິບຈາກການປູກຝັງ ຫຼື ທຳມະຊາດ ຕ້ອງສ້າງລະບົບຄຸ້ມຄອງຂະບວນການຜະລິດ ເປັນຕົ້ນ ການຄຸ້ມຄອງສິ້ນເຂົ້າວັດຖຸດິບ ແລະ ສິ້ນອອກຜະລິດຕະພັນ ເພື່ອຮັບປະກັນດ້ານວັດຖຸດິບ, ການປຸງແຕ່ງ ແລະ ຜະລິດຕະພັນໃຫ້ໄດ້ມາດຕະຖານ, ມີຄຸນນະພາບ, ປອດໄພຕໍ່ການບໍລິໂພກ ແລະ ຮັບປະກັນການນຳໃຊ້ວັດຖຸດິບ, ພະລັງງານຢ່າງປະຢັດ ແລະ ມີປະສິດທິຜົນສູງ.

## ມາດຕາ 35 ການຄຸ້ມຄອງການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບ

ການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບ ເພື່ອມາທຳການຜະລິດຢູ່ໃນໂຮງງານປຸງແຕ່ງພືດ ຕ້ອງຂໍອະນຸຍາດ ນຳເຂົ້າຈາກຂະແໜງການກະສິກຳ ແລະ ປ່າໄມ້. ວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບທີ່ນຳເຂົ້າ ຕ້ອງໄດ້ມາດຕະຖານ ແລະ ມີຄຸນນະພາບດີ, ຖືກຕ້ອງຕາມເປົ້າໝາຍຂອງການຜະລິດ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີ ຂອງໂຮງງານປຸງແຕ່ງພືດ.

ສຳລັບການນຳເຂົ້າສານເຄມີ ເພື່ອຮັບໃຊ້ໃນຂະບວນການຜະລິດ ຫຼື ປຸງແຕ່ງ ຕ້ອງປະຕິບັດຕາມລະບຽບກົດໝາຍ ສະເພາະ.

## ມາດຕາ 36 ການຄຸ້ມຄອງບຸກຄະລາກອນ

ບຸກຄະລາກອນທີ່ເຮັດວຽກໃນໂຮງງານປຸງແຕ່ງພືດ ຕ້ອງໄດ້ຮັບການຝຶກອົບຮົມ ໃຫ້ມີຄວາມຮູ້ພື້ນຖານ ກ່ຽວກັບ ມາດຕະຖານການຜະລິດທີ່ດີຂອງໂຮງງານ (GMP), ມາດຕະຖານການຜະລິດ ກ່ຽວກັບຄວາມປອດໄພຂອງຜົນຜະລິດ (GAP), ວິທະຍາການຫຼັງການເກັບກ່ຽວ, ການປ້ອງກັນພືດ ແລະ ການກັກກັນພືດ ແລະ ດ້ານອື່ນທີ່ກ່ຽວຂ້ອງ ຢ່າງໜ້ອຍປີລະຄັ້ງ ເພື່ອໃຫ້ເໝາະສົມກັບໜ້າທີ່ ຕາມທີ່ຖືກມອບໝາຍ.

## ມາດຕາ 37 ການຄຸ້ມຄອງສຸຂານາໄມ ແລະ ສຸຂານາໄມພືດ

ພາຍໃນໂຮງງານປຸງແຕ່ງພືດ ຕ້ອງມີລະບົບປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ສັດພາຫະນຳເຊື້ອພະຍາດ ເຂົ້າມາໃນພື້ນທີ່ຜະລິດ ແລະ ພື້ນທີ່ເກັບຮັກສາ ດ້ວຍການບຳລຸງຮັກສາ, ສ້ອມແປງອາຄານ ແລະ ສະຖານທີ່ດຳເນີນການຜະລິດ ໃຫ້ຢູ່ໃນສະພາບດີ ເພື່ອກຳຈັດແຫຼ່ງທີ່ອາດເປັນບ່ອນຂະຫຍາຍພັນຂອງແມງໄມ້ ແລະ ສັດພາຫະນຳເຊື້ອ, ປິດຮອຍແຕກ ແລະ ຮູນ້ຳ ທີ່ອາດເຮັດໃຫ້ສັດ ສາມາດເຂົ້າມາໄດ້ ພ້ອມທັງ ສຳຫຼວດ, ຕິດຕາມ ແລະ ເຝົ້າລະວັງສັດຕູພືດ ດ້ວຍການນຳໃຊ້ກັບດັກໃນການຄວບຄຸມ ແລະ ກຳຈັດ ໃຫ້ທັນເວລາ. ໃນກໍລະນີ ມີການນຳໃຊ້ສານເຄມີ ຕ້ອງບັນທຶກລະອຽດ ກ່ຽວກັບ ຊື່ສານເຄມີ, ໄລຍະການນຳໃຊ້, ສານອອກລິດ, ປະລິມານນຳໃຊ້ ແລະ ຈຳນວນຄັ້ງທີ່ນຳໃຊ້ ເພື່ອຫຼີກເວັ້ນບໍ່ໃຫ້ມີຜົນກະທົບຕໍ່ ຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ ແລະ ຜູ້ນຳໃຊ້. ໒.໑໔

**ມາດຕາ 38 ການຄຸ້ມຄອງຜະລິດຕະພັນ**

ຜະລິດຕະພັນທີ່ໄດ້ຜ່ານຂະບວນການຜະລິດຂອງໂຮງງານປຸງແຕ່ງພືດ ຕ້ອງຮັບປະກັນໃຫ້ມີຄຸນນະພາບດີ, ໄດ້ມາດຕະຖານ, ມີສຸຂານາໄມທີ່ດີ ແລະ ມີຄວາມປອດໄພຕໍ່ຜູ້ຊົມໃຊ້ ຫຼື ຜູ້ບໍລິໂພກ ໂດຍຖືກຕ້ອງຕາມລະບຽບການທາງດ້ານເຕັກນິກ ຫຼື ມາດຕະຖານໃດໜຶ່ງ ທີ່ຕະຫຼາດຕ້ອງການ.

ຜະລິດຕະພັນ ຕ້ອງເກັບຮັກສາໄວ້ ບໍ່ໃຫ້ສຳພັດກັບພື້ນໂດຍກົງ ແລະ ໃຫ້ແຍກຈາກສານເຄມີທີ່ເປັນອັນຕະລາຍ. ພາຊະນະບັນຈຸຜະລິດຕະພັນ ຕ້ອງສະອາດ ແລະ ບໍ່ຈີກຂາດ, ການເກັບຮັກສາຕ້ອງຈັດລຽງກອງຜະລິດຕະພັນຢ່າງເປັນລະບຽບ, ບໍ່ປົນກັນ ແລະ ມີປ້າຍຈຳແນກຊຸດຜະລິດຕະພັນ ຢ່າງຊັດເຈນ.

ໂຮງງານປຸງແຕ່ງພືດ ຕ້ອງມີລະບົບບັນທຶກຂໍ້ມູນວັດຖຸດິບ, ການຜະລິດ ແລະ ການແຈກຢາຍຜະລິດຕະພັນຢ່າງຈະແຈ້ງ ເມື່ອມີບັນຫາ ກ່ຽວກັບ ຄວາມປອດໄພຕໍ່ສຸຂະພາບ, ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ແມ່ນໃຫ້ສາມາດກວດສອບ, ຮຽກເກັບຄືນຢ່າງຄົບຖ້ວນ ແລະ ທັນເວລາ.

**ມາດຕາ 39 ການຄຸ້ມຄອງການກຳຈັດ ແລະ ບຳບັດສິ່ງເສດເຫຼືອ**

ການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານປຸງແຕ່ງພືດ ທີ່ກໍ່ໃຫ້ເກີດສິ່ງເສດເຫຼືອປະເພດຕ່າງໆເປັນຕົ້ນ ມົນລະພິດທາງ ນ້ຳ, ອາກາດ, ສິ່ງເສດເຫຼືອປະເພດແຂງ ແລະ ອັນຕະລາຍ, ແສງ, ສຽງດັງ, ຄວາມສັ່ນສະເທືອນ ແລະ ອື່ນໆ ຕ້ອງໄດ້ທຳການບຳບັດ ແລະ ກຳຈັດສິ່ງເສດເຫຼືອ ໃຫ້ຢູ່ໃນເກນມາດຕະຖານຈຶ່ງສາມາດປ່ອຍອອກສູ່ສິ່ງແວດລ້ອມພາຍນອກໄດ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕ້ອງໄດ້ອອກແບບລະບົບ ບຳບັດ ແລະ ກຳຈັດສິ່ງເສດເຫຼືອຂອງໂຮງງານ ແລ້ວນຳສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງ, ຫຼັງຈາກນັ້ນ ຈຶ່ງສາມາດດຳເນີນການກໍ່ສ້າງ, ຕິດຕັ້ງລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອໄດ້.

**ມາດຕາ 40 ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ**

ພາຍໃນໂຮງງານປຸງແຕ່ງພືດ ຕ້ອງມີລະບົບຮັກສາຄວາມປອດໄພ ເປັນຕົ້ນ ລະບົບປ້ອງກັນອັກຄີໄພ, ລະບົບຄວາມປອດໄພຈາກໄຟຟ້າ, ລະບົບປ້ອງກັນອັນຕະລາຍຈາກເຄື່ອງຈັກ, ລະບົບຮັກສາຄວາມປອດໄພຂອງຄົນງານ ແລະ ມີບຸກຄະລາກອນບໍລິຫານຄວາມປອດໄພ ແລະ ສຸຂານາໄມສະເພາະ ໂດຍມີຈຳນວນພຽງພໍ, ແທດເໝາະກັບປະເພດ ແລະ ຂະໜາດຂອງແຕ່ລະໂຮງງານປຸງແຕ່ງພືດ. ບຸກຄະລາກອນບໍລິຫານຄວາມປອດໄພ ແລະ ສຸຂານາໄມ ມີໜ້າທີ່ໃນການກວດກາ, ຕິດຕາມ, ລາຍງານ, ປະສານສົມທົບ ແລະ ຈັດຝຶກອົບຮົມກ່ຽວກັບ ວຽກງານຄວາມປອດໄພ ແລະ ສຸຂານາໄມ ແນໃສ່ ຫຼີກລ່ຽງອຸປະຕິເຫດແຮງງານ, ຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ, ຮັກສາຄວາມເປັນລະບຽບ, ຄວາມສະອາດ ແລະ ສຸຂານາໄມພາຍໃນໂຮງງານປຸງແຕ່ງພືດ ໃຫ້ເປັນປົກກະຕິ.

ໃນກໍລະນີ ຫາກເກີດອຸປະຕິເຫດທີ່ເຮັດໃຫ້ລະບົບການຜະລິດເສຍຫາຍ ແລະ ເປ່ເພ, ເຮັດໃຫ້ຄົນບາດເຈັບ ຫຼື ເສຍຊີວິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບທັນທີ ເພື່ອຫາມາດຕະການແກ້ໄຂ.

## ໝວດທີ 6
## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ

**ມາດຕາ 41 ສິດ ຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ມີ ສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດໂຮງງານປຸງແຕ່ງພືດ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການດຳເນີນກິດຈະການໂຮງງານ; ຜ.ຈ

2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
3. ເຄື່ອນໄຫວດຳເນີນກິດຈະການ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ;
4. ສະເໜີຂໍນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳຈາກພາກລັດ ແລະ ພາກສ່ວນອື່ນທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບ ການດຳເນີນກິດຈະການໂຮງງານປຸງແຕ່ງພືດ;
5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້, ຂາຍ, ຂະຫຍາຍການດຳເນີນກິດຈະການໂຮງງານປຸງແຕ່ງພືດ ແລະ ຢຸດເຊົາກິດຈະການໂຮງງານ ຕາມລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
7. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 42 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມບົດວິພາກເສດຖະກິດ-ເຕັກນິກ, ມາດຕະຖານເຕັກນິກ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ;
2. ເສຍພາສີ, ອາກອນ, ພັນທະ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
3. ປະຕິບັດຕາມລະບຽບການ ກ່ຽວກັບ ການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ໃຫ້ສະຫວັດດີການ, ອຸປະກອນປ້ອງກັນຄວາມປອດໄພຂອງຄົນງານ ແລະ ອື່ນໆ;
4. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານປຸງແຕ່ງພືດ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ໄພພິບັດປະຈຳໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
5. ລາຍງານ ການເກີດອຸປະຕິເຫດຂັ້ນຮ້າຍແຮງພາຍໃນໂຮງງານປຸງແຕ່ງພືດ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
6. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;
7. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບ ການເຄື່ອນໄຫວໂຮງງານຂອງຕົນ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ;
8. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງກະສິກຳ ແລະ ປ່າໄມ້;
9. ກ່ອນຢຸດເຊົາດຳເນີນກິດຈະການໂຮງງານຖາວອນ ຕ້ອງໄດ້ກຳຈັດ ຫຼື ບຳບັດສິ່ງເສດເຫຼືອອັນຕະລາຍໃຫ້ຖືກຕ້ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
10. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມ ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ລັດ;
11. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ. ໑໓

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 43 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ທີ່ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ຕໍ່ກັບການສົ່ງເສີມ ແລະ ພັດທະນາວຽກງານປຸງແຕ່ງພືດ;
3. ອະນຸຍາດທຸກຮູບແບບ ໃຫ້ໂຮງງານປຸງແຕ່ງພືດ ເຄື່ອນໄຫວກິດຈະການທີ່ບໍ່ມີໃບຢັ້ງຢືນການດຳເນີນກິດຈະການໂຮງງານ ຫຼື ບໍ່ລາຍງານ ກ່ຽວກັບ ການດຳເນີນກິດຈະການໂຮງງານປຸງແຕ່ງພືດ ທີ່ຜິດກົດໝາຍ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 44 ຂໍ້ຫ້າມ ສຳລັບ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ

ຫ້າມ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສ້າງຕັ້ງ, ຍົກຍ້າຍ, ດຳເນີນກິດຈະການ ແລະ ຂະຫຍາຍໂຮງງານປຸງແຕ່ງພືດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຕິດຕັ້ງເຄື່ອງຈັກ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຕັ້ງໂຮງງານປຸງແຕ່ງພືດ ຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຫຼື ເຂດຫວງຫ້າມ;
4. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ;
5. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ;
6. ນຳເຂົ້າວັດຖຸດິບ, ເຄື່ອງຈັກ ຫຼື ແຮງງານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ນຳເຂົ້າ ຫຼື ນຳໃຊ້ທາດເຄມີອັນຕະລາຍໂດຍບໍ່ໄດ້ຮັບອະນຸຍາດ;
8. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານປຸງແຕ່ງພືດ ໄດ້ນຳໃຊ້ໜີບໃສ່ເຄື່ອງຈັກໃຫ້ຢຸດເຊົາການເຄື່ອນໄຫວ;
9. ປ່ຽນຊື່ໂຮງງານປຸງແຕ່ງພືດ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານປຸງແຕ່ງພືດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້;
10. ປອມແປງເອກະສານ, ປິດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
11. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ຕາມລະບຽບການ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 45 ຂໍ້ຫ້າມ ສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ຂະແໜງການກະສິກຳ ແລະ ປ່າໄມ້ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສິມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ;
2. ຮັບສິນບົນ; ໒.໑໔

3. ເມີນເສີຍຕໍ່ການລາຍງານກ່ຽວກັບໂຮງງານປຸງແຕ່ງພືດ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍ;
4. ເປີດເຜີຍເອກະສານຂອງຜູ້ປະກອບການໂຮງງານປຸງແຕ່ງພືດ;
5. ກົດໜ່ວງ, ຖ່ວງດຶງເອກະສານ ຫຼື ປອມແປງລາຍເຊັນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 46 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກລະເມີດຂໍ້ຫ້າມ ກົດໝາຍສະບັບນີ້ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ດຳເນີນທາງແພ່ງ ຫຼື ອາຍາ ແລ້ວແຕ່ ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 8
## ການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງພືດ

**ມາດຕາ 47 ອົງການຄຸ້ມຄອງ ແລະ ກວດກາໂຮງງານປຸງແຕ່ງພືດ**

ອົງການຄຸ້ມຄອງ ແລະ ກວດກາໂຮງງານປຸງແຕ່ງພືດ ແມ່ນຂະແໜງການກະສິກຳ ແລະ ປ່າໄມ້ ປະກອບດ້ວຍ:

1. ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້;
2. ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້;
3. ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້
4. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
5. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
6. ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາໂຮງງານປຸງແຕ່ງພືດ ສາມາດແຕ່ງຕັ້ງໜ່ວຍງານກວດກາ ຊຶ່ງປະກອບດ້ວຍພະນັກງານວິຊາການ ທີ່ໄດ້ຮັບການຝຶກອົບຮົມດ້ານເຕັກນິກວິຊາການ ຈາກກົມປູກຝັງ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງກົມປູກຝັງ**

ໃນການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງພືດ ກົມປູກຝັງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບ ໂຮງງານປຸງແຕ່ງພືດ;
2. ໂຄສະນາ, ເຜີຍແຜ່, ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບ ໂຮງງານປຸງແຕ່ງພືດ;
3. ຄົ້ນຄວ້ານຳສະເໜີ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ເຫັນດີດ້ານຫຼັກການ ກ່ຽວກັບ ການສ້າງຕັ້ງໂຮງງານປຸງແຕ່ງພືດ, ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ;
4. ຄົ້ນຄວ້ານຳສະເໜີ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດ ຂະໜາດໃຫຍ່ ແລະ ໂຮງງານປຸງແຕ່ງພືດເພື່ອການສົ່ງອອກ;
5. ຄົ້ນຄວ້າ ແລະ ຮັບຮອງບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງພືດ;
6. ສຶກສາ, ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ແຜນຄວາມຕ້ອງການວັດຖຸດິບປ້ອນໂຮງງານປຸງແຕ່ງພືດ ແລະ ຄວາມອາດສາມາດຂອງກຳລັງການຜະລິດ; ໓.໑໕

7. ຮັບຮອງ ແລະ ອະນຸຍາດ ການນຳເຂົ້າ ວັດຖຸດິບ, ເຄື່ອງຈັກ, ຊິ້ນສ່ວນ ແລະ ອາໄຫຼ່ເຄື່ອງຈັກ, ຊິ້ນສ່ວນ ແລະ ອາໄຫຼ່ຍານພາຫະນະ ແລະ ອຸປະກອນຮັບໃຊ້ ການກໍ່ສ້າງໂຮງງານ ແລະ ການຜະລິດຂອງໂຮງງານປຸງແຕ່ງພືດ;
8. ສ້າງ ແລະ ພັດທະນາ ລະບົບຖານຂໍ້ມູນໂຮງງານປຸງແຕ່ງພືດ ໃນຂອບເຂດທົ່ວປະເທດ;
9. ສ້າງ ແລະ ພັດທະນາຫຼັກສູດຝຶກອົບຮົມ ກ່ຽວກັບມາດຕະຖານການຜະລິດກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ເຕັກນິກວິທະຍາການຫຼັງການເກັບກ່ຽວ, ການປຸງແຕ່ງພືດ, ການປ້ອງກັນ ແລະ ມາດຕະການປ້ອງກັນເຊື້ອພະຍາດລະບາດຕ່າງໆ ເປັນຕົ້ນແມ່ນ Covid-19 ແລະ ດ້ານອື່ນທີ່ກ່ຽວຂ້ອງ;
10. ເປັນໃຈກາງປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຂັ້ນຕອນການສ້າງຕັ້ງໂຮງງານ, ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ, ການຈັດຕັ້ງປະຕິບັດ, ການປັບປຸງດັດສົມໂຮງງານປຸງແຕ່ງພືດ, ວັດຖຸດິບສົ່ງເຂົ້າ ແລະ ຜະລິດຕະພັນສົ່ງອອກ ຂອງໂຮງງານປຸງແຕ່ງພືດ ໃນຂອບເຂດທົ່ວປະເທດ;
11. ສັງລວມລາຍງານ ວຽກງານການປັບປຸງ ແລະ ດັດສົມໂຮງງານປຸງແຕ່ງພືດ ຕໍ່ລັດຖະບານ;
12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງໂຮງງານປຸງແຕ່ງພືດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງກົມສົ່ງເສີມກະສິກຳ ແລະ ສະຫະກອນ**

ໃນການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງພືດ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງກະສິກຳຂະໜາດນ້ອຍ ລະດັບຄອບຄົວ, ກຸ່ມ ແລະ ສະຫະກອນ;
2. ຈັດຕັ້ງການຜະລິດ, ກຸ່ມ, ສະຫະກອນ, ຟາມ ແລະ ເຄືອຂ່າຍຊາວກະສິກອນ ເພື່ອສະໜອງວັດຖຸດິບປ້ອນໂຮງງານ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ດ້ວຍການຊຸກຍູ້, ສົ່ງເສີມ ແລະ ຖ່າຍທອດເຕັກນິກ, ເຕັກໂນໂລຊີການປູກ, ການລ້ຽງ, ການອົບ, ການຕາກ, ໂຮງຄັດແຍກເມັດພັນ, ຄັດເກດ, ຫຸ້ມຫໍ່ ແລະ ການປຸງແຕ່ງ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ**

ໃນການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງພືດ ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຊຸກຍູ້ ແລະ ພັດທະນາໂຮງງານ ແລະ ເຄື່ອງຄັດແຍກເມັດພັນ, ເຄື່ອງອົບເມັດພັນ, ສາງເຢັນເກັບເມັດພັນພືດ;
2. ຄົ້ນຄວ້າ ແລະ ພັດທະນາ ເຕັກນິກ ການຜະລິດ, ການປຸງແຕ່ງພືດ ເພື່ອສະໜອງ ແນວພັນພືດໃຫ້ແກ່ການຜະລິດວັດຖຸດິບປ້ອນໂຮງງານປຸງແຕ່ງພືດ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ**

1. ໂຄສະນາ, ເຜີຍແຜ່ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບ ການສ້າງ ຕັ້ງໂຮງງານປຸງແຕ່ງພືດ; ໒.໑໘

2. ຄົ້ນຄວ້ານຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາ ເຫັນດີດ້ານຫຼັກການ ກ່ຽວກັບ ການສ້າງຕັ້ງໂຮງງານປຸງແຕ່ງພືດ, ອອກຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງ ໂຮງງານ ປຸງແຕ່ງພືດຂະໜາດກາງ ຫຼື ນ້ອຍ;
3. ອອກ, ດັດແກ້, ໂຈະ ຫຼື ຍົກເລີກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງພືດຂະໜາດ ກາງ ຫຼື ນ້ອຍ ຕາມການມອບໝາຍ;
4. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ມາດຕະຖານ, ເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມຂອງໂຮງງານປຸງແຕ່ງພືດ ແລະ ຕິດຕາມສິນເຂົ້າວັດຖຸດິບ ແລະ ສິນອອກ ຜະລິດຕະພັນ, ການປັບປຸງດັດສົມໂຮງງານປຸງແຕ່ງພືດ ຢູ່ໃນແຂວງຂອງຕົນ;
5. ຈັດຕັ້ງການຜະລິດ, ກຸ່ມ, ສະຫະກອນ, ຟາມ ແລະ ເຄືອຂ່າຍຊາວກະສິກອນ ເພື່ອສະໜອງ ວັດຖຸດິບປ້ອນໂຮງງານ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ດ້ວຍການຊຸກຍູ້, ສົ່ງເສີມ ແລະ ຖ່າຍທອດເຕັກນິກ, ເຕັກໂນໂລຊີການປູກ, ການລ້ຽງ, ການອົບ, ການຕາກ, ໂຮງ ຄັດແຍກເມັດພັນ, ຄັດເກດ, ຫຸ້ມຫໍ່ ແລະ ການປຸງແຕ່ງ;
6. ຝຶກອົບຮົມ ກ່ຽວກັບ ມາດຕະຖານການຜະລິດກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ເຕັກນິກວິທະຍາການ ຫຼັງການເກັບກ່ຽວ, ການປຸງແຕ່ງພືດ, ການປ້ອງກັນ ແລະ ການກັກກັນ ພືດ, ມາດຕະການປ້ອງກັນເຊື້ອພະຍາດລະບາດຕ່າງໆ ເປັນຕົ້ນແມ່ນ Covid-19 ແລະ ດ້ານອື່ນໆທີ່ກ່ຽວຂ້ອງ;
7. ເຂົ້າຮ່ວມເປັນຄະນະກຳມະການ ໃນການກວດກາ ແລະ ປະເມີນໂຮງງານປຸງແຕ່ງພືດ;
8. ປະກອບຄຳເຫັນຢັ້ງຢືນແຜນການເຄື່ອນໄຫວປະຈຳງວດ ແລະ ປະຈຳປີຂອງໂຮງງານປຸງແຕ່ງ ພືດ;
9. ສະຫຼຸບລາຍງານຂໍ້ມູນ ແລະ ສະພາບການເຄື່ອນໄຫວຂອງໂຮງງານປຸງແຕ່ງພືດ ໃຫ້ ກົມປູກຝັງ ປະຈຳງວດ ແລະ ປະຈຳປີ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ**

ໃນການຄຸ້ມຄອງ ແລະ ກວດກາ ໂຮງງານປຸງແຕ່ງພືດ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບ ການ ສ້າງ ຕັ້ງໂຮງງານປຸງແຕ່ງພືດ;
2. ເຂົ້າຮ່ວມ, ຊຸກຍູ້ ຕິດຕາມ ແນະນຳ ແລະ ກວດກາ ມາດຕະຖານ, ເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ແລະ ຕິດຕາມການປັບປຸງດັດສົມໂຮງງານປຸງແຕ່ງພືດ ທີ່ຕັ້ງຢູ່ໃນ ເມືອງ ຂອງຕົນ;
3. ເຂົ້າຮ່ວມເປັນຄະນະກຳມະການ ໃນການກວດກາ ແລະ ປະເມີນໂຮງງານປຸງແຕ່ງພືດ;
4. ຈັດຕັ້ງການຜະລິດ, ກຸ່ມ, ສະຫະກອນ, ຟາມ ແລະ ເຄືອຂ່າຍຊາວກະສິກອນ ເພື່ອສະໜອງ ວັດຖຸດິບປ້ອນໂຮງງານ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ດ້ວຍການຊຸກຍູ້, ສົ່ງເສີມ ແລະ ຖ່າຍທອດເຕັກນິກ, ເຕັກໂນໂລຊີການປູກ, ການລ້ຽງ, ການອົບ, ການຕາກ, ໂຮງ ຄັດແຍກເມັດພັນ, ຄັດເກດ, ຫຸ້ມຫໍ່ ແລະ ການປຸງແຕ່ງ;
5. ເຂົ້າຮ່ວມ, ຕິດຕາມ ແລະ ກວດກາພືດ ສິນເຂົ້າວັດຖຸດິບ ແລະ ສິນອອກຜະລິດຕະພັນ ຂອງ ໂຮງງານປຸງແຕ່ງພືດ ທີ່ຕັ້ງຢູ່ໃນເມືອງ ຂອງຕົນ;
6. ສະຫຼຸບລາຍງານ ຂໍ້ມູນ ແລະ ສະພາບການເຄື່ອນໄຫວ ຂອງໂຮງງານປຸງແຕ່ງພືດ ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ຂັ້ນແຂວງ ປະຈຳງວດ ແລະ ປະຈຳປີ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ. ໒.໙໒

**ມາດຕາ 53 ການກວດກາ ໂຮງງານປຸງແຕ່ງພືດ**

ການກວດກາໂຮງງານປຸງແຕ່ງພືດ ແມ່ນ ການກວດກາການດໍາເນີນກິດຈະການ, ສະພາບເຕັກນິກຂອງ ອາຄານໂຮງງານ, ເຄື່ອງຈັກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມໂຮງງານ, ຄວາມປອດໄພແຮງ ງານ, ການນໍາໃຊ້ແຮງງານ, ກວດກາຜະລິດຕະພັນໂຮງງານປຸງແຕ່ງພືດ, ກວດກາລະບົບກໍາຈັດ ແລະ ບໍາບັດສິ່ງ ເສດເຫຼືອ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງ ການປະຕິບັດ ສິດ ແລະ ພັນທະ ຂອງຜູ້ດໍາ ເນີນກິດຈະການໂຮງງານປຸງແຕ່ງພືດ.

**ມາດຕາ 54 ຮູບການກວດກາໂຮງງານປຸງແຕ່ງພືດ**

ການກວດກາໂຮງງານປຸງແຕ່ງພືດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

**ມາດຕາ 55 ການກວດກາຕາມລະບົບປົກກະຕິ**

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ, ກວດກາຕາມຂັ້ນຕອນ ແລະ ມີກໍານົດເວລາອັນແນ່ນອນ ຊຶ່ງປະກອບດ້ວຍ ການກວດກາກ່ອນການສ້າງຕັ້ງໂຮງງານປຸງແຕ່ງພືດ, ການດໍາເນີນ ກິດຈະການ, ການຕໍ່ອາຍຸ, ການຂະຫຍາຍໂຮງງານ ແລະ ການສິ້ນສຸດກິດຈະການໂຮງງານປຸງແຕ່ງພືດ.

ການກວດກາປົກກະຕິ ຕ້ອງສ້າງແຜນລົງກວດກາໂດຍກໍານົດວັນເວລາຢ່າງຈະແຈ້ງ ແລະ ຕ້ອງໄດ້ ປະຕິບັດເປັນປະຈໍາຢ່າງໜ້ອຍ ໂຮງງານລະໜຶ່ງຄັ້ງຕໍ່ປີ, ກ່ອນລົງກວດກາຕ້ອງແຈ້ງໃຫ້ຜູ້ດໍາເນີນກິດຈະການ ໂຮງງານປຸງແຕ່ງພືດ ຊາບກ່ອນລ່ວງໜ້າຢ່າງໜ້ອຍ ສາມ ວັນ ກ່ອນມື້ລົງກວດກາ ພ້ອມທັງເຮັດບົດບັນທຶກ ກວດກາ.

**ມາດຕາ 56 ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ**

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາຕາມແຜນ ຫຼື ນອກແຜນ, ກ່ອນລົງ ກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ຜູ້ດໍາເນີນກິດຈະການໂຮງງານປຸງແຕ່ງພືດ ທີ່ຈະລົງກວດກາຮັບຊາບກ່ອນລ່ວງ ໜ້າ ຢ່າງໜ້ອຍ ຫ້າ ວັນ.

ການກວດການອກແຜນ ແມ່ນການກວດກາໃນກໍລະນີທີ່ເຫັນວ່າມີຄວາມຈໍາເປັນ ຫຼື ຕາມຄໍາສັ່ງທີ່ ຕ້ອງໄດ້ລົງກວດກາ ເຊັ່ນ: ການສ້າງຕັ້ງໂຮງງານປຸງແຕ່ງພືດ, ການຂະຫຍາຍໂຮງງານ ຫຼື ການເຄື່ອນໄຫວ ກິດຈະການໂຮງງານປຸງແຕ່ງພືດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 57 ການກວດກາແບບກະທັນຫັນ**

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈໍາເປັນ ແລະ ຮີບ ດ່ວນເປັນຕົ້ນ ມີຄໍາສັ່ງຊີ້ນໍາຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງ ຂອງ ບຸກຄົນ, ນິຕິບຸກ ຄົນ ຫຼື ການຈັດຕັ້ງ ກ່ຽວກັບ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ສົງໄສວ່າ ອາດກໍ່ໃຫ້ເກີດບັນຫາທີ່ ເປັນຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ, ການເຄື່ອນໄຫວຂອງໂຮງງານບໍ່ຖືກຕ້ອງ ຕາມເປົ້າໝາຍຂອງການ ອະນຸຍາດ, ເຄື່ອນໄຫວຜິດຕໍ່ລະບຽບກົດໝາຍ, ເກີດອຸປະຕິເຫດແຮງງານ, ເກີດອັກຄີໄພມີຜົນເສຍຫາຍຮ້າຍ ແຮງຕໍ່ຊີວິດ ແລະ ຊັບສິນ.

ການກວດກາແບບກະທັນຫັນ ແມ່ນລົງກວດກາໄດ້ທຸກເວລາ ໂດຍທີ່ບໍ່ໄດ້ແຈ້ງໃຫ້ຜູ້ດໍາເນີນ ກິດຈະການໂຮງງານປຸງແຕ່ງພືດ ຊາບ ພ້ອມທັງເຮັດບົດບັນທຶກກວດກາ. ໗.໑໙

**ມາດຕາ 58 ຜູ້ລົງກວດກາໂຮງງານປຸງແຕ່ງພືດ**

ຜູ້ທີ່ມີສິດລົງກວດກາໂຮງງານປຸງແຕ່ງພືດ ຕາມມາດຕາ 55, 56 ແລະ ມາດຕາ 57 ຂອງຂໍ້ຕົກລົງສະບັບນີ້ ແມ່ນພະນັກງານວິຊາການ ທີ່ຖືກແຕ່ງຕັ້ງຈາກຂະແໜງການກະສິກໍາ ແລະ ປ່າໄມ້ ແຕ່ລະຂັ້ນໃຫ້ເປັນຄະນະກໍາມະການກວດກາໂຮງງານປຸງແຕ່ງພືດ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 59 ການຈັດຕັ້ງປະຕິບັດ**

ໃຫ້ກົມປູກຝັງ, ກົມສົ່ງເສີມກະສິກໍາ ແລະ ສະຫະກອນ, ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 60 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການສິບຫ້າ ວັນ. ໒.໙

**ລັດຖະມົນຕີ**

**ປອ. ເພັດ ພົມພິພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄຳຮ້ອງ

☐ ຂໍສ້າງຕັ້ງໂຮງງານປຸງແຕ່ງພືດ, ☐ ຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ

☐ ຂໍຂະຫຍາຍໂຮງງານປຸງແຕ່ງພືດ ☐ ຂໍຕໍ່ອາຍຸການດຳເນີນກິດຈະການໂຮງງານປຸງແຕ່ງພືດ

**ຮຽນ: ທ່ານ**......................................................................................................

(ໂດຍຜ່ານ......................................................................................................)

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງພືດ ສະບັບເລກທີ 3736/ກປ, ລົງວັນທີ 19 ສິງຫາ 2022;
- ອີງຕາມ ໃບທະບຽນວິສະຫາກິດ ເລກທີ ......................................, ລົງວັນທີ ..............................................

ຂ້າພະເຈົ້າທ່ານ.......................................................................................................

ສັນຊາດ:............................, ອາຍຸ: ...................ປີ, ອາຊີບ:...........................................................,

ໃນນາມເປັນຜູ້ອຳນວຍການຂອງ ບໍລິສັດ:...........................................................................................,

ມີທີ່ຕັ້ງສຳນັກງານຢູ່ບ້ານ:.............................., ເມືອງ:..............................., ແຂວງ:.................................,

ໂທລະສັບ...................................................., E-mail...........................................................,

ມີທີ່ຕັ້ງໂຄງການຢູ່ບ້ານ:..........................., ເມືອງ:............................, ແຂວງ:.................................,

ມີຈຸດປະສົງ:......................................................................................................................,

ເພື່ອເຄື່ອນໄຫວດຳເນີນກິດຈະການ: ......................................................................................

..........................................................................................................................................

.......................................................................................................................,

ໃຫ້ຖືກຕ້ອງສອດຄ່ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປລາວ.

## I. ຂໍ້ມູນຂໍ້ມູນຂໍສ້າງຕັ້ງໂຮງງານປຸງແຕ່ງພືດ

1. ໃບຄຳຮ້ອງຂອງ ບໍລິສັດ:.....................................................................................................,
2. ຂໍ້ຕົກລົງ ການສ້າງຕັ້ງໂຮງງານກິດຈະການໂຮງງານປຸງແຕ່ງພືດ ສະບັເລກທີ...................., ລົງວັນທີ................,

## II. ຂໍ້ມູນສຳລັບການຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ

1. ຂໍ້ຕົກລົງ ການສ້າງຕັ້ງກິດຈະການໂຮງງານປຸງແຕ່ງພືດ ສະບັບເລກທີ......................ລົງວັນທີ.......................,

## III. ຂໍ້ມູນສຳລັບການຂໍຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງພືດ

1. ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງພືດທີ່ໝົດອາຍຸ ສະບັບເລກທີ...............ລົງວັນທີ....................
2. ຕໍ່ອາຍຸຄັ້ງທີ.........

## IV. ຂໍ້ມູນສຳລັບການຂະຫຍາຍກິດຈະການໂຮງງານປຸງແຕ່ງພືດ

## V. ຂອບເຂດທີ່ດິນຂອງໂຮງງານ

1. ທິດເໜືອຕິດກັບດິນ................................, ຍາວ.............ແມັດ, ຖັດໄປເປັນດິນ................................,
2. ທິດໃຕ້ຕິດກັບດິນ................................, ຍາວ...............ແມັດ, ຖັດໄປເປັນດິນ..............................,

3. ທິດຕາເວັນອອກຕິດກັບດິນ......................., ຍາວ................ແມັດ, ຖັດໄປເປັນດິນ...............................,

4. ທິດຕາເວັນຕົກຕິດກັບ..........................., ຍາວ................ແມັດ, ຖັດໄປເປັນດິນ...............................,

**VI. ຄາດຄະເນເຄື່ອນໄຫວການຜະລິດ**

ຈຳນວນວັນເຮັດວຽກຕໍ່ອາທິດ..............................ວັນ; ຈຳນວນຜຽນເຮັດວຽກຕໍ່ວັນ.................................ຜຽນ.

**VII. ມູນຄ່າການລົງທຶນ**

1. ທຶນຈົດທະບຽນ..............................................................................................................ໂດລາ/ກີບ.
2. ທຶນທັງໝົດ..................................................................................................................ໂດລາ/ກີບ.

**VIII. ຈຳນວນຄົນ**

1. ກຳມະກອນທັງໝົດ...........................ຄົນ, ຍິງ:.......................ຄົນ, ຕ່າງປະເທດ:..........................ຄົນ.
2. ພະນັກງານບໍລິຫານ ແລະ ພະນັກງານວິຊາການ...............ຄົນ, ຍິງ.............ຄົນ, ຕ່າງປະເທດ................ຄົນ.

**IX. ເຄື່ອງຈັກ ແລະ ພາຫານະ** (ໃຫ້ຄັດຕິດລາຍການລະອຽດຂອງເຄື່ອງຈັກໃສ່ພ້ອມ)

1. ເຄື່ອງຈັກທັງໝົດທີ່ມີແລ້ວ..............................ເຄື່ອງ, ກຳລັງແຮງລວມ:....................................ແຮງມ້າ.
2. ເຄື່ອງຈັກເພີ່ມໃໝ່.........................................ເຄື່ອງ, ກຳລັງແຮງລວມ:....................................ແຮງມ້າ.
3. ພາຫານະ.......................................ຄັນ, ກຳລັງແຮງ...........................ຊີຊີ

**X. ປະລິມານການນຳໃຊ້ນ້ຳ ແລະ ເຊື້ອເພີງ**

1. ນ້ຳປະປາ......................................... ມ$^3$/ເດືອນ;
2. ນ້ຳທຳມະຊາດ.................................. ມ$^3$/ເດືອນ;
3. ນ້ຳບາດານ...................................... ມ$^3$/ເດືອນ;
4. ໄຟຟ້າ........................................... Kw/ເດືອນ.
5. ຟືນ, ຂີ້ເລື່ອຍ.................................. ມ3/ເດືອນ;
6. ນ້ຳມັນເຕົາ...................................... ມ$^3$/ເດືອນ;

**XI. ວັດຖຸດິບຕົ້ນຕໍ ແລະ ສຳຮອງ ທີ່ນຳໃຊ້ເຂົ້າໃນການຜະລິດ**

| ຊື່ວັດຖຸດິບ | ຄາດຄະເນການຊົມໃຊ້ຕໍ່ປີ | ແຫຼ່ງທີ່ມາ (ພາຍໃນ/ຕ່າງປະເທດ) |
|---|---|---|
| 1.................................................................... | ........................ | ................................ |
| 2.................................................................... | ........................ | ................................ |
| 3.................................................................... | ........................ | ................................ |

**XII. ຜະລິດຕະພັນຕົ້ນຕໍ, ສຳຮອງ ຫຼື ຜະລິດຕະພັນໃໝ່**

| ຊື່ຜະລິດຕະພັນ | ຄາດຄະເນການຜະລິດຕໍ່ປີ | ຈຳໜ່າຍພາຍໃນ/ຕ່າງປະເທດ |
|---|---|---|
| 1........................................................ | ........................ | ................................ |
| 2........................................................ | ........................ | ................................ |
| 3........................................................ | ........................ | ................................ |

**XIII. ຂໍ້ມູນສຳລັບການຂໍຂະຫຍາຍໂຮງງານປຸງແຕ່ງພືດ, ຂະຫຍາຍໂຮງງານຄັ້ງທີ...............**

ຂະຫຍາຍໂຮງງານດ້ວຍການເພີ່ມ: ☐ ເຄື່ອງຈັກ, ☐ ເນື້ອທີ່ອາຄານໂຮງງານ.

1. ບໍລິເວນໂຮງງານມີເນື້ອທີ່ທັງໝົດ:............ມ$^2$, ເນື້ອທີ່ອາຄານໂຮງງານ:...........ມ$^2$, ເພີ່ມຂຶ້ນໃໝ່...........ມ$^2$;

ເອກະສານຊ້ອນທ້າຍ: 01

2. ອາຄານໂຮງງານ: ☐ ມີຢູ່ເດີມ............ຫຼັງ, ☐ ກໍ່ສ້າງຂຶ້ນໃໝ່............ຫຼັງ, ລວມຈຳນວນ............ຫຼັງ ຄື:

| ອາຄານໂຮງງານ | ຈຳນວນຊັ້ນ | ຂະໜາດ (ແມັດ) | ໂຄງສ້າງເຮັດດ້ວຍ | ພື້ນເຮັດດ້ວຍ | ຝາເຮັດດ້ວຍ | ເພດານເຮັດດ້ວຍ | ຫຼັງຄາເຮັດດ້ວຍ |
|---|---|---|---|---|---|---|---|
| 1............................ | ............ | .......... | .............. | .............. | .............. | ............ | ............ |
| 2............................ | ............ | .......... | .............. | .............. | .............. | ............ | ............ |
| 3............................ | ............ | .......... | .............. | .............. | .............. | ............ | ............ |

ຂ້າພະເຈົ້າຂໍຢັ້ງຢືນວ່າໄດ້ປະກອບຂໍ້ມູນ ແລະ ເອກະສານຄັດຕິດໃນໃບຄຳຮ້ອງສະບັບນີ້ແມ່ນຖືກຕ້ອງຄົບຖ້ວນ ແລະ ເປັນຄວາມຈິງ. ສະນັ້ນ, ຈຶ່ງສະເໜີມາຍັງທ່ານ ພິຈາລະນາອານຸມັດຕາມກົດໝາຍ ແລະ ລະບຽບດ້ວຍ.

ທີ່..................................., ວັນທີ..............................

**ຜູ້ຮ້ອງຂໍ**

**ເຊັນ ແລະ ປະທັບກາ**

**ໝາຍເຫດ:**

1. ກໍລະນີຂໍ້ມູນຫາກຫຼາຍກວ່າໃນຕາຕະລາງ ໃຫ້ເຮັດຕາຕະລາງລະອຽດຄັດຕິດ.
2. ໃຫ້ຕິກຄັດເອກະສານຊ້ອນທ້າຍ 01, 02, 03 , 04 ຕາມແຕ່ລະກໍລະນີ.

❖ **ເອກະສານປະກອບຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ (ການລົງທຶນ ສຳລັບໂຮງງານປຸງແຕ່ງພືດ)**

**1. ລາຍການເອກະສານຊ້ອນທ້າຍ 01**

**ເອກະສານປະກອບຂໍສ້າງຕັ້ງໂຮງງານປຸງແຕ່ງພືດ**

☐ 1. ໃບຄຳຮ້ອງ ຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ ຕາມແບບພິມທີ່ກົມປູກຝັງກຳນົດ;

☐ 2. ບົດວິພາກເສດຖະກິດ-ເຕັກນິກໂຮງງານປຸງແຕ່ງພືດ;

☐ 3. ສຳເນົາ ໃບທະບຽນວິສາຫະກິດ;

☐ 4. ສຳເນົາ ໃບຢັ້ງຢືນການມອບອາກອນ;

☐ 5. ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;

☐ 6. ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;

☐ 7. ສຳເນົາ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສຳລັບໂຮງງານປຸງແຕ່ງພືດ;

☐ 8. ສຳເນົາ ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບມອບກຳມະສິດທີ່ດິນ ຫຼື ໃບຕາດິນ;

☐ 9. ສຳເນົາ ໃບອະນຸຍາດປຸກສ້າງໂຮງງານປຸງແຕ່ງພືດ.

**ໝາຍເຫດ:ເອກະສານທັງໝົດ ໃຫ້ປະກອບເປັນ 03 ຊຸດ.**

---

**2. ລາຍການເອກະສານຊ້ອນທ້າຍ 02**

**ເອກະສານປະກອບຂໍດຳເນີນກິດຈະການໂຮງງານປຸງແຕ່ງພືດ**

☐ 1. ໃບຄຳຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ຕາມແບບພິມ ຣ1 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;

☐ 2. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ຂອງກະຊວງກະສິກຳ ແລະ ປ່າໄມ້;

☐ 3. ໃບມອບສິດ ໃນກໍລະນີໃຫ້ບຸກຄົນອື່ນມາພົວພັນແທນ;

☐ 4. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;

☐ 5. ລາຍການເຄື່ອງຈັກໃນໂຮງງານ;

☐ 6. ແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານປຸງແຕ່ງພືດ;

☐ 7. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;

☐ 8. ຮູບຖ່າຍຂະໜາດ 3x4 ຊັງຕີແມັດ ຈຳນວນ ສີ່ ໃບ ຮູບຖ່າຍຕ້ອງບໍ່ເກີນ ສາມ ເດືອນ;

☐ 9. ສຳເນົາ ໃບຢັ້ງຢືນການມອບອາກອນ;

☐ 10. ສຳເນົາ ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສຳລັບໂຮງງານປຸງແຕ່ງພືດ;

☐ 11. ສຳເນົາໃບທະບຽນວິສາຫະກິດ;

☐ 12. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງຄົນຕ່າງປະເທດ (Passport);

☐ 13. ສຳເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສຳປະທານ;

☐ 14. ສຳເນົາ ໃບຢັ້ງຢືນແຜນການຕິດຕັ້ງລະບົບບຳບັດ ຫຼື ໃບຢັ້ງຢືນການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານປຸງແຕ່ງພືດ ຕາມທີ່ ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບ ທີ່ ກ່ຽວຂ້ອງ;

☐ 15. ສຳເນົາ ໃບຢັ້ງຢືນຮັບຮອງບົດວິພາກເສດຖະກິດ-ເຕັກນິກ ຂອງໂຮງງານປຸງແຕ່ງພືດ.

**ໝາຍເຫດ:ເອກະສານທັງໝົດ ໃຫ້ປະກອບເປັນ 03 ຊຸດ.**

---

**3. ລາຍການເອກະສານຊ້ອນທ້າຍ 03**

**ເອກະສານປະກອບຂໍຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງພືດ ຄັ້ງທີ........**

☐ 1. ໃບຄໍາຮ້ອງ ຂໍຕໍ່ອາຍຸດໍາເນີນກິດຈະການໂຮງງານປຸງແຕ່ງພືດ ຕາມແບບພິມ ຣ1 ໃນເອກະສານຊ້ອນທ້າຍ ຂອງຂໍ້ຕົກລົງສະບັບນີ້;

☐ 2. ບົດລາຍງານການເຄື່ອນໄຫວຂອງໂຮງງານຜ່ານມາປະຈໍາ 3 ປີ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ;

☐ 3. ສໍາເນົາ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງພືດ ຂອງກະຊວງກະສິກໍາ ແລະ ປ່າໄມ້;

☐ 4. ໃບມອບສິດໃຫ້ຜູ້ມາພົວພັນປະກອບເອກະສານ;

☐ 5. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;

☐ 6. ສໍາເນົາ ລາຍການເຄື່ອງຈັກໃນໂຮງງານປຸງແຕ່ງພືດ;

☐ 7. ສໍາເນົາ ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງພືດ ສະບັບຕົ້ນ;

☐ 8. ສໍາເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;

☐ 9. ຮູບຖ່າຍຂະໜາດ 3x4 ຊມ ຈໍານວນ 4 ໃບ ຮູບຖ່າຍຕ້ອງບໍ່ເກີຍ 3 ເດືອນ.

☐ 10. . ສໍາເນົາ ໃບຢັ້ງຢືນການມອບອາກອນ;

☐ 11. ສໍາເນົາ ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສໍາລັບໂຮງງານປຸງແຕ່ງພືດ;

☐ 12. ສໍາເນົາ ໃບທະບຽນວິສາຫະກິດ;

☐ 13. ສໍາເນົາ ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືເດີນທາງຄົນຕ່າງປະເທດ (Passport);

☐ 14. ສໍາເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສໍາປະທານ;

☐ 15. ສໍາເນົາ ໃບຢັ້ງຢືນແຜນການຕິດຕັ້ງລະບົບບໍາບັດ ຫຼື ໃບຢັ້ງຢືນການປ່ອຍສິ ງເສດເຫຼືອ ອອກຈາກໂຮງງານ ປຸງແຕ່ງພືດ ຕາມທີ່ ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບ ທີ່ ກ່ຽວຂ້ອງ;

☐ 15. ສໍາເນົາ ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບມອບກໍາມະສິດທີ່ດິນ ຫຼື ໃບຕາດິນ;

**ໝາຍເຫດ:ເອກະສານທັງໝົດ ໃຫ້ປະກອບເປັນ 03 ຊຸດ.**

---

**4. ລາຍການເອກະສານຊ້ອນທ້າຍ 04**

**ເອກະສານປະກອບຂໍຂະຫຍາຍກິດຈະການໂຮງງານປຸງແຕ່ງພືດ ຄັ້ງທີ........**

☐ 1. ໃບຄໍາຮ້ອງຂໍຂະຫຍາຍໂຮງງານປຸງແຕ່ງພືດ;

☐ 2. ໃບມອບສິດໃຫ້ຜູ້ມາພົວພັນປະກອບເອກະສານ ກໍລະນີທີ່ບໍ່ໄດ້ມາພົວພັນດ້ວຍຕົວເອງ;

☐ 3. ແຜນວາດຂະບວນການຜະລິດ ພ້ອມບົດອະທິບາຍ ສະບັບດັດແກ້;

☐ 4. ລາຍການເຄື່ອງຈັກໃນໂຮງງານປຸງແຕ່ງພືດ ສະບັບດັດແກ້;

☐ 5. ແຜນການເຄື່ອນໄຫວປະຈໍາປີຂອງໂຮງງານປຸງແຕ່ງພືດ ສະບັບດັດແກ້;

☐ 6. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານປຸງແຕ່ງພືດ ຂະໜາດເຈ້ຍ A3 ທີ່ຖືກຕ້ອງຕາມ **ລະບຽບການກ່ຽວກັບການປຸກສ້າງ ສະບັບດັດແກ້ ເຊັ່ນ:**

☐ 1. ແຜນຜັງສະແດງໃຫ້ເຫັນທີ່ຕັ້ງໂຮງງານປຸງແຕ່ງພືດ ໃນຂອບເຂດລັດສະໝີ 500 ແມັດ;

☐ 2. ແຜນຜັງສະແດງສິ່ງປຸກສ້າງໃນບໍລິເວນໂຮງງານປຸງແຕ່ງພືດ;

☐ 3. ແຜນຜັງກໍ່ສ້າງອາຄານຜະລິດ ຮູບດ້ານໜ້າ, ຂ້າງ, ຫຼັງ ແລະ ຮູບຕັດ;

☐ 4. ແຜນຜັງຕິດຕັ້ງເຄື່ອງຈັກ ແລະ ເຄື່ອງຍົກນ້ຳໜັກ ຕາມເລກໝາຍຂອງລາຍການເຄື່ອງຈັກທີ 4;

☐ 5. ແຜນຜັງຕິດຕັ້ງເຕົາອົບ ແລະ ໝໍ້ຕົ້ມນ້ຳ ຫຼື ເຕົາສະຕີມ, ຖ່ານຫີນ;

☐ 6. ແຜນຜັງຕິດຕັ້ງລະບົບໄຟຟ້າ, ພັດລົມ ແລະ ລະບົບລະບາຍອາກາດ;

☐ 7. ແຜນຜັງຕິດຕັ້ງລະບົບປ້ອງກັນອັນຕະລາຍ, ອັກຄີໄພ ແລະ ທາງອອກສຸກເສີນ.

**ສຳເນົາເອກະສານຄັດຕິດ ມີດັ່ງນີ້:**

☐ 1. ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຜົດ;

☐ 2. ໃບອະນຸຍາດປຸກສ້າງໂຮງງານປຸງແຕ່ງຜົດ ສ່ວນຂະຫຍາຍ;

☐ 3. ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ ຫຼື ໃບຢັ້ງຢືນການມອບພັນທະອາກອນ;

☐ 4. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສຳລັບໂຮງງານທີ່ຢູ່ໃນບັນຊີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

☐ 5. ໃບອະນຸຍາດປຸກສ້າງໂຮງງານປຸງແຕ່ງຜົດ;

☐ 6. ໃບຢັ້ງຢືນແຜນການຕິດຕັ້ງລະບົບບຳບັດ ແລະ/ຫຼື ໃບຢັ້ງຢືນການປ່ອຍສິ່ງເສດເຫຼືອອອກຈາກໂຮງງານປຸງແຕ່ງຜົດ;

☐ 7. ໃບສັນຍາເຊົ່າທີ່ດິນ/ອາຄານ ຫຼື ໃບມອບກຳມະສິດທີ່ດິນ ແລະ ໃບຕາດິນ;

☐ 8. ໃບສັນຍາເຊົ່າທີ່ດິນ/ອາຄານ ຫຼື ໃບມອບກຳມະສິດທີ່ດິນ ແລະ ໃບຕາດິນ;

**ໝາຍເຫດ:ເອກະສານທັງໝົດ ໃຫ້ປະກອບເປັນ 03 ຊຸດ.**

ຮ.2

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ຫ້ອງການ

ເລກທີ................../ຫກ

ນະຄອນຫຼວງວຽງຈັນ, ວັນທີ.........................

# ໃບຢັ້ງຢືນ

## ການດຳເນີນກິດຈະການໂຮງງານປຸງແຕ່ງຜົດ

(ຕໍ່ອາຍຸຄັ້ງທີ......... / ຂະຫຍາຍໂຮງງານຄັ້ງທີ.........)

ຮູບຂະໜາດ 3 x 4

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງຜົດ ສະບັບເລກທີ ................../ກປ, ລົງວັນທີ .............................;
- ອີງຕາມ ໃບຄຳຮ້ອງຂອງໂຮງງານ ລົງວັນທີ ...............................................................;
- ອີງຕາມ ບົດບັນທຶກ ການກວດກາໂຮງງານ ສະບັບລົງວັນທີ .........../ ......../ ...................;

**ກະຊວງກະສິກຳ ແລະ ປ່າໄມ້ ອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງຜົດ ໃຫ້ແກ່:**

ທ່ານ ............................................,ອາຍຸ: .........,ປີ,ສັນຊາດ ...................................................

ໃນນາມ:.............................................................................................................................

ປະຈຸບັນຢູ່ບ້ານ:........................................,ເມືອງ:.................................,ແຂວງ:..............................,

ໂທລະສັບ:...................................,ແຟັກ:..................................,ມືຖື:.............................................

ຊື່ວິສາຫະກິດ ..................................................,ຊື່ໂຮງງານ...........................................................

ດຳເນີນກິດຈະການ ...............................................................................................................

- ຕິດຕັ້ງເຄື່ອງຈັກທັງໝົດ............................ເຄື່ອງ, ກຳລັງແຮງມ້າລວມ ........................................ແຮງມ້າ;

- ຄວາມສາມາດການຜະລິດ ....................................... ໂຕນ/ປີ.

ເລກລະຫັດ ......................................................, ຈັດເຂົ້າໂຮງງານຂະໜາດ ............................................

ໂຮງງານຕັ້ງຢູ່ບ້ານ:..................................;ເມືອງ:.................................;ແຂວງ:.........................................

ຜູ້ໄດ້ຮັບໃບຢັ້ງຢືນສະບັບນີ້ ຕ້ອງດຳເນີນກິດຈະການຕາມທີ່ໄດ້ຮັບອະນຸຍາດຂ້າງເທິງ ແລະ ປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

ໃບຢັ້ງຢືນສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ໄດ້ ຈົນເຖິງວັນທີ........./......./..................

**ເຊັນແທນ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້**

**ຫົວໜ້າ ຫ້ອງການ ກະຊວງ**